# ແຈ້ງການເປີດປະມູນ

**1. ເອກະສານປະມູນ**

ອີງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ທະນາຄານລາວຈີນ ຈຳກັດ (ຕໍ່ໄປນີ້ເອີ້ນວ່າ: ຜູ້ເປີດປະມູນ), ໄດ້ດຳເນີນການປະມູນສາທາລະນະໃນໂຄງການ "ການຈັດຊື້ອຸປະກອນໂຄງຮ່າງພື້ນຖານແບບຮອບດ້ານພາຍໃນໂຄງການລະບົບ Corebanking ໃໝ່ຂອງທະນາຄານລາວຈີນ"(ເລກທີໂຄງການ: **LCNB20240801**), ໂຄງການແມ່ນກຽມພ້ອມສຳລັບການປະມູນ, ພວກເຮົາຂໍເຊີນຊວນຜູ້ຮ່ວມປະມູນທີ່ມີຄຸນະວຸດທິຄ້າຍຄືກັນເຂົ້າມາປະມູນໂຄງການນີ້ດ້ວຍ.

**2. ພາບລວມໂຄງການ ແລະເນື້ອໃນການໃຫ້ບໍລິການ**

2. 1ຊື່ໂຄງການ: ການຈັດຊື້ອຸປະກອນໂຄງຮ່າງພື້ນຖານແບບຮອບດ້ານພາຍໃນໂຄງການລະບົບ Corebanking ໃໝ່ຂອງທະນາຄານລາວຈີນ

2. 2ຂອບເຂດການປະມູນ: ການຈັດຊື້ອຸປະກອນໂຄງຮ່າງພື້ນຖານແບບຮອບດ້ານພາຍໃນໂຄງການລະບົບ Core banking ໃໝ່ຂອງທະນາຄານລາວຈີນເພື່ອຮັບປະກັນໃນການດຳເນີນການ **online** ລະບົບ Corebanking ໃໝ່, ໃນຫ້ອງແມ່ນຂ່າຍຢູ່ນະຄອນຫຼວງວຽງຈັນ, ເຊິ່ງມີແມ່ຂ່າຍ, ເຊີເວີ້, ຄວາມປອດໄພອື່ນໆ, ພ້ອມທັງສ້າງແລະປັບປຸງລະບົບໂຄງສ້າງພື້ນຖານດ້ານໄອທີ. ສຳລັບລາຍລະອຽດກ່ຽວກັບຂໍ້ກຳນົດໃນການສ້າງແມ່ນໃຫ້ເບິ່ງ ພາກທີ4ໃນເອກະສານປະມູນ "ມາດຕະຖານແລະຂໍ້ກຳນົດດ້ານເຕັກນິກ"

2. 3ແຫຼ່ງທຶນ: ດ້ວຍຕົວເອງ, ສະຖານະແຫຼ່ງທຶນ: ສອດຄ່ອງກັນ.

2. 4ໄລຍະເວລາການສະໜອງສັນຍາ: 1 ປີ (ນັບແຕ່ວັນທີ່ເຊັນສັນຍາ)

2. 5ຄວາມຕ້ອງການດ້ານຄຸນນະພາບ: ສະໜອງຕາມຄວາມຕ້ອງການຂອງຜູ້ເປີດປະມູນ, ພ້ອມທັງອີງຕາມມາດຕະຖານ ແລະ ຄວາມຕ້ອງການຂອງເອກະສານປະມູນ.

2. 6ໄລຍະເວລາການສົ່ງມອບສິນຄ້າ(ສຳເລັດການຕິດຕັ້ງແລະດັດແກ້): ພາຍໃນ 60 ວັນຫຼັງໄດ້ຮັບໃບສັ່ງສິນຄ້າ.

2. 7ໄລຍະເວລາບຳລຸງຮັກສາໂດຍບໍ່ມີຄ່າໃຊ້ຈ່າຍ: 3ປີນັບຈາກວັນທີລົງລາຍເຊັນມອບຮັບ.

2. 8ການແບ່ງສ່ວນການປະມູນ: ໂຄງການນີ້ຈະບໍ່ຖືກແບ່ງອອກເປັນພາກສ່ວນການປະມູນ.

2. 9ລາຄາຄວບຄຸມສູງສຸດ (ລວມອາກອນ): ລາຄາລວມບໍ່ເກີນ $500,000.00 (ຕົວໜັງສື: ຫ້າແສນໂດລາ)

**3. ຄວາມຕ້ອງການດ້ານຄຸນສົມບັດຂອງຜູ້ປະມູນ**

3. 1ຜູ້ປະມູນຕ້ອງເປັນນິຕິບຸກຄົນ ຫຼື ອົງກອນທີ່ຖືກຕ້ອງຕາມກົດໝາຍທີ່ໄດ້ລົງທະບຽນຢູ່ໃນສປປລາວ, ຕ້ອງມີໃບອະນຸຍາດດຳເນີນທຸລະກິດທີ່ຖືກຕ້ອງ (ຫຼືເອກະສານການຢັ້ງຢືນທາງດ້ານກົດໝາຍອື່ນໆ) ແລະ ມີໃບອະນຸຍາດນຳເຂົ້າອຸປະກອນ ICT.

3. 2ມີສະຖານະການເງິນທີ່ດີ: ຕ້ອງການໃນຊ່ວງປີ 2021 ຫາ 2023, ບົດລາຍງານການກວດສອບ (ຖ້າມີ) ແລະໃບລາຍງານ (ລວມທັງໃບດຸ່ນດ່ຽງ, ໃບລາຍງານກະແສເງິນສົດ, ໃບລາຍງານລາຍໄດ້ (ຫຼືໃບລາຍງານຜົນກຳໄລຂາດທຶນ) ). [ໝາຍເຫດ: ຖ້າສ້າງຕັ້ງຂຶ້ນໜ້ອຍກວ່າ 3 ປີ, ໃຫ້ລາຍງານສະຖານະການເງິນຕັ້ງແຕ່ສ້າງຕັ້ງ (ລວມທັງແຕ່ບໍ່ຈຳກັດໃນໃບດຸ່ນດ່ຽງ, ໃບລາຍງານກະແສເງິນສົດ,ໃບລາຍງານລາຍໄດ້ (ຫຼືໃບລາຍງານຜົນກຳໄລຂາດທຶນ) );ຖ້າມັນເປັນບໍລິສັດທີ່ສ້າງຕັ້ງໃຫມ່ໃນປີ 2024, ໃຫ້ສະໜອງເອກະສານຢັ້ງຢືນສິນເຊື່ອອອກໃຫ້ໂດຍທະນາຄານ ຫຼືເອກະສານຢັ້ງຢືນກອງທຶນ. ]

3. 3ກຸ່ມບໍລິສັດບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າຮ່ວມການປະມູນນີ້

ໝາຍເຫດ:

① ນິຕິບຸກຄົນ,ອົງກອນຫຼືບຸກຄົນທີ່ມີສາຍສຳພັນທີ່ມີສ່ວນໄດ້ສ່ວນເສຍກັບຜູ້ເປີດປະມູນແມ່ນບໍ່ອະນຸຍາດເຂົ້າຮ່ວມປະມູນ.

② ຫົວໜ່ວຍທຸລະກິດທີ່ມີຜູ້ຮັບຜິດຊອບຫຼືຜູ້ຖືຫຸ້ນຜູ້ດຽວກັນ, ຄວາມສຳພັນກັນຂອງຫົວໜ່ວຍຕ່າງໆແມ່ນບໍ່ສາມາເຂົ້າຮ່ວມປະມູນໃນໂຄງການດຽວກັນ(ຫຼືການສະເໜີລາຄາພ້ອມກັນ)

**4.ວິທີການກວດສອບຄຸນສົມບັດ: ການກວດສອບຄຸນສົມບັດ**

**5.ການຮັບເອກະສານປະມູນ**

ທ່ານໃດສົນໃຈເຂົ້າຮ່ວມປະມູນ, ພາຍໃນວັນທີ 19/08/2024ເຖິງ 25/08/2024 (ຍົກວັນພັກ ແລະ ວັນພັກເທດສະການ), ເວລາຮັບເອກະສານປະມູນແມ່ນທຸກໆເຊົ້າເວລາ 08:30-11:30, ຕອນບ່າຍເວລາ 13:30-17:00 (ເວລາປະເທດລາວ)

ວິທີຮັບເອກະສານປະມູນ: ພີຣເອົາໄດ້ທີ່ທະນາຄານ

ເມື່ອໄດ້ຮັບເອກະສານປະມູນແລ້ວ, ຕ້ອງມີສຳເນົາໃບອະນຸຍາດດຳເນີນທຸລະກິດຂອງຜູ້ເຂົ້າຮ່ວມປະມູນພ້ອມທັງປະທັບຕາຢ່າງເປັນທາງການ, ໃບອະນຸຍາດຕົວແທນທາງກົດໝາຍ, ຫຼັກຖານສະແດງຕົວຕົນຂອງຕົວແທນຕົ້ນສະບັບ, ສະຖານທີ່ທະນາຄານ ລາວຈີນ ສຳນັກງານໃຫຍ່ຊັ້ນ6ພະແນກຫ້ອງການ, ເຮືອນເລກທີ 268, ໜ່ວຍ 12, ບ້ານ ສີບຸນເຮືອງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.

**6.ການຍື່ນເອກະສານປະມູນ**

6.1ກຳນົດເວລາສົ່ງເອກະສານການປະມູນແມ່ນ 09/09/2024 ເວລາ 8:30 (ເວລາປະເທດລາວ), ສະຖານທີ່ສົ່ງແມ່ນທະນາຄານ ລາວຈີນ ສຳນັກງານໃຫຍ່ຊັ້ນ6ພະແນກຫ້ອງການ, ເຮືອນເລກທີ 268, ໜ່ວຍ 12, ບ້ານ ສີບຸນເຮືອງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.

6.2ຜູ້ປະມູນຈະບໍ່ຮັບເອົາເອກະສານປະມູນທີ່ສົ່ງຊ້າ ຫຼືບໍ່ໄດ້ສົ່ງເຖິງສະຖານທີ່ທີ່ໄດ້ກຳນົດ, ຫຼືບໍ່ໄດ້ປະທັບຕາຕາມເງື່ອນໄຂຂອງເອກະສານປະມູນ.

**7.ຊ່ອງທາງການປະກາດປະມູນ**

ຄັ້ງນີ້ປະກາດປະມູນໃນເວັບໄຊ້ຂອງທະນາຄານ（http://www.laochinabank.com/）, ວຽງຈັນທາມ, ວຽງຈັນໃໝ່ແລະຊ່ອງທາງອື່ນພ້ອມໆກັນ. ຜູ້ເປີດປະມູນບໍ່ໄດ້ຮັບຜິດຊອບໃດໆຕໍ່ການປະກາດແລະເນື້ອໃນການປະກາດທີ່ສ້າງຂຶ້ນໃໝ່ໂດຍເວັບໄຊອື່ນຫຼືສື່ອື່ນໆ.

**8.ຂໍ້ມູນຕິດຕໍ່**

ຜູ້ເປີດປະມູນ: ທະນາຄານລາວຈີນ ຈຳກັດ

ທີ່ຢູ່: ທະນາຄານ ລາວຈີນ ສຳນັກງານໃຫຍ່, ເຮືອນເລກທີ 268, ໜ່ວຍ 12, ບ້ານ ສີບຸນເຮືອງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.

ຕິດຕໍ່: ທ. ລັດສະໝີ ຈັນທະວົງ, ທ. ອານຸສັກ ຕຽງມະນີ

ເບີໂທຕິດຕໍ່: +856 20 59888855 ， +8562059666971

**9.ຮ້ອງທຸກ**

ເບີໂທຕິດຕໍ່：+856 20 23500652

ອີເມວ：phetsaboun@laochinabank.com

ທະນາຄານ ລາວຈີນ
ວັນທີ 19/08/2024